ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສິ່ງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສໍາເລັດການໄຂກອງປະຊຸມໃນການປະເມີນເສດຖະກິດມະຫາພາກຂອງ ສປປ ລາວ ພາຍໃຕ້ມາດຕາ IV ຂອງ ກອງທຶນການເງິນສາກົນ ປະຈໍາປີ 2021 (International Monetary Fund Article IV Consultation 2021)





ໃນວັນທີ 6 ທັນວາ 2021 ຜ່ານມານີ້, ຕ່າງໜ້າ ທະນາຄານແຫ່ງ ສປປ ລາວ (ທຫລ) ນໍາໂດຍ ທ່ານ ນາງ ວັດທະນາ ດາລາລອຍ, ຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະໄດ້ສໍາເລັດການໄຂກອງປະຊຸມໃນການປະເມີນເສດຖະກິດມະຫາພາກຂອງ ສປປ ລາວ ພາຍໃຕ້ມາດຕາ IV ຂອງ ກອງທຶນການເງິນສາກົນ ປະຈໍາປີ 2021 (International Monetary Fund Article IV Consultation 2021) ຜ່ານລະບົບອອນໄລ, ທ່ານ Alasdair Scott, ຫົວໜ້າທີມປະເມີນເສດຖະກິດມະຫາພາກຂອງ ສປປ ລາວ ຕາງໜ້າຈາກຫ້ອງການ IMF ສໍານັກງານໃຫຍ່ ແລະ ພະນັກງານຫ້ອງການ IMF ປະຈໍາ ສປປ ລາວ ເຂົ້າຮ່ວມ.

ການປະເມີນໃນຄັ້ງນີ້, ແມ່ນຈະໄດ້ຈັດໃນລະຫວ່າງວັນທີ 6-20 ທັນວາ 2021 ຊຶ່ງ ຫ້ອງການ IMF ໄດ້ສະເໜີເຂົ້າຮ່ວມພົບປະຮ່ວມເຮັດວຽກກັບບັນດາກະຊວງ ແລະ ອົງການຈັດຕັ້ງຫຼາຍພາກສ່ວນທີ່ຕິດພັນໃນການມາປະເມີນເສດ ຖະກິດມະຫາພາກຂອງ ສປປ ລາວ. ການປະເມີນເສດຖະກິດມະຫາພາກຂອງ ສປປ ລາວ, ຕິດພັນກັບ ທຫລ ແມ່ນຈະໄດ້ມີການປຶກສາຫາລືກ່ຽວກັບ ສະພາບເສດຖະກິດມະຫາພາກ, ຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19, ດ້ານນະໂຍບາຍເງິນຕາ (Monetary Policy), ວຽກງານຄຸ້ມຄອງທະນາຄານທຸລະກິດ, ເຕັກໂນໂລຊີທາງດ້ານການເງິນ (Financial Technology) ໂດຍສະເພາະການຂຸດຄົ້ນສະກຸນເງິນດິຈິຕອນ (Digital Currency) ແລະ ການອອກສະກຸນເງິນດິຈິຕອນ ໂດຍທະນາຄານກາງ (Central Banks Digital Currencies) ລວມທັງປັດໄຈສິ່ງທ້າທາຍທີ່ຈະສົ່ງຜົນກະທົບຕໍ່ກັບການພັດທະນາເສດຖະກິດໃນຕໍ່ໜ້າ.

- ຂ່າວໂດຍ: ກົມຮ່ວມມືສາກົນ
- ພາບໂດຍ: ທ. ສົມພິດ ທຫລ

*ຢູ່ເມືອງລາວໃຊ້ເງິນກີບລາວ*